ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກຳມະບານຮາກຖານ ທຫລ ມອບແນວພັນພືດ ໃຫ້ແກ່ບ້ານທີ່ຮັບຜົນກະທົບຈາກນ້ຳຖ້ວມ




ໃນວັນທີ 16 ພະຈິກ 2018; ຄະນະບໍລິຫານງານສະຫະພັນກຳມະບານຮາກຖານທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ນຳເອົາແນວພັນເຂົ້າປູກ ແລະ ແນວພັດພືດ ໄປມອບໃຫ້ແກ່ປະຊາຊົນ 3 ບ້ານຢູ່ເມືອງນາຊາຍທອງ, ແຂວງນະຄອນຫຼວງວຽງຈັນ ຄື: ບ້ານທຸ່ມແບ່ງ, ບ້ານເປີກ ແລະ ບ້ານນ້ຳທຸ່ມ ເຊິ່ງຕາງໜ້າກ່າວມອບໂດຍທ່ານ ພອນສະຫວັນ ຄຳພາວົງ ຮອງຫົວໜ້າກົມບັນຊີ, ທຫລ, ຄະນະບໍລິຫານງານກຳມະບານຮາກຖານ ທຫລ ແລະ ກ່າວຮັບໂດຍທ່ານ ວຽງຄຳ ສີຫາໂຄດ ຮອງເຈົ້າເມືອງງນາຊາຍທອງພ້ອມນີ້, ກໍ່ມີຜູ້ຕາງໜ້າຈາກຫ້ອງການກະສິກຳເມືອງ, ນາຍບ້ານ ແລະ ປະຊາຊົນທັງສາມບ້ານເຂົ້າຮ່ວມ.




ແນວພັນພືດທຳການຜະລິດທີ່ນຳໄປມອບລວມມີແນວພັນເຂົ້າປູກ, ແນວພັນພືດປະເພດຜັກບົ້ງ, ໝາກແຕງ ແລະ ໝາກຖົ່ວ, ພ້ອມນັ້ນ ຍັງມີເຄື່ອງມືທຳການຜະລິດ ຄືຈົກເປັນຕົ້ນ ເຊິ່ງລວມມູນຄ່າ 6 ລ້ານກວ່າກີບ.

ໃນການນຳເອົາແນວພັນພືດໄປມອບໃຫ້ແກ່ປະຊາຊົນທັງ 3 ບ້ານໃນເທື່ອນີ້ ກໍ່ເພື່ອເປັນການຊ່ວຍເຫຼືອປະຊາຊົນທີ່ໄດ້ຮັບຜົນກະທົບຈາກເຫດການນໍ້າຖ້ວມໃນເດືອນ ກັນຍາ 2018 ທີ່ຜ່ານມາ ເຊິ່ງເຮັດໃຫ້ເນື້ອທີ່ທຳການຜະລິດຂອງປະຊາຊົນ ທັງ 3 ບ້ານ ຖືກຜົນກະທົບເສຍຫາຍເປັນຈຳນວນຫຼາຍ. ສະນັ້ນ, ເພື່ອປະກອບສ່ວນຊ່ວຍເຫຼືອປະຊາຊົນອີກທາງໜຶ່ງ; ຄະນະບໍລິຫານງານກຳມະບານຮາກຖານ ທຫລ ຈຶ່ງເຫັນໄດ້ເຖິງຄວາມເດືອດຮ້ອນ ແລະ ຈຳເປັນຂອງປະຊາຊົນ ທີ່ໄດ້ຮັບຜົນເສຍຫາຍຈາກໄພທຳມະຊາດ ເພື່ອໃຫ້ເຂົາເຈົ້າໄດ້ນຳເອົາແນວພັນເຄື່ອງປູກດັ່ງກ່າວໄປທຳການຜະລິດ ທົດແທນຜົນລະປູກທີ່ຖືກເສຍຫາຍ.

ໃນຕອນທ້າຍ ທ່ານ ຮອງເຈົ້າເມືອງງນາຊາຍທອງ ໄດ້ກ່າວສະແດງຄວາມຂອບໃຈຕໍ່ການຈັດຕັ້ງຂອງ ທຫລ ໂດຍສະເພາະຄະນະນຳຂອງຂະແໜງການທະນາຄານ ທີ່ໄດ້ແນມເຫັນຄວາມຈຳເປັນ ແລະ ໃຫ້ການຊ່ວຍເຫຼືອປະຊາຊົນໃນເທື່ອນີ້ ເຊິ່ງອຳນາດການປົກຄອງເມືອງ, ບ້ານ ແລະ ປະຊາຊົນ ຂໍສະແດງຄວາມຂອບໃຈຕໍ່ການນຳແຕ່ລະຂັ້ນຂອງ ທຫລ ຢ່າງຈິງໃຈ.

**# ຂ່າວ-ພາບ: ສົມອົກ ເຄນຄຳແພງ**

# ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ